# ວາລະສານIN BRIEF

# ບົດບາດຍິງ-ຊາຍ ແລະ ການປົກຄອງ

**ປະກອບມີປະເດັນເລົ່ານີ້:**

- **ບົດບາດຍິງ-ຊາຍ ແລະ ການປົກຄອງ: ພາບລວມ**
- **30 ປີ ຜ່ານມາ CEDAW : ເລື່ອງການປ່ຽນແປງຈາກປະເທດເອຢິບ**
- **ການນໍາເອົາກົດໝາຍວ່າດ້ວຍຄວາມຮຸນແຮງທາງເພດເຂົ້າໃນພາກປະຕິບັດຕົວຈິງ ໃນປະເທດຟີລິປິນ**

ລະບົບການປົກຄອງ - ໂດຍເນັ້ນໃສ່ຫຼັກການແຫ່ງຄວາມຮັບຜິດຊອບ, ຄວາມໂປ່ງໃສ, ການຕອບສະໜອງ ແລະ ການມີສ່ວນຮ່ວມ - ໝາຍເຖິງການປ່ຽນແປງການປະຕິຮູບທາງດ້ານສັງຄົມ. ແຕ່ເຖິງວ່າ ມັນມີຄວາມເປັນໄປໄດ້, ພວກເຂົາກໍ່ຍັງມີຂໍ້ບົກພ່ອງໃນການສ້າງຄວາມສະເໝີພາບບົດບາດຍິງ-ຊາຍ. ແມ່ຍິງຕ້ອງໄດ້ຕໍ່ສູ້ເພື່ອເຮັດໃຫ້ສຽງຂອງເຂົາເຈົ້າໄດ້ຮັບຟັງ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງເຂົາເຈົ້າ. ອົງການຈັດຕັ້ງຂອງແມ່ຍິງ ແມ່ນຕ້ອງໄດ້ອອກແຮງເພື່ອຊຸກຍູ້ໃຫ້ມີການຮັບຮູ້ສິດທິຂອງແມ່ຍິງ ແລະ ເພື່ອໃຫ້ມີກົນໄກການສ້າງຄວາມຮັບຜິດຊອບ. ເປັນຫຍັງຈຶ່ງຕ້ອງເປັນແນວນັ້ນ ແລະ ພຶດຕິກໍາແນວໃດ ຈະເຮັດໃຫ້ພວກເຂົາເຈົ້າສາມາດບັນລຸເຖິງຄວາມອາດສາມາດ ໃນການສ້າງຄວາມເຂັ້ມແຂງຂອງ ແມ່ຍິງ ແລະ ນໍາໄປສູ່ຄວາມຍຸຕິທໍາໃນສັງຄົມ? ວາລະສານ In Brief ໄດ້ກໍານົດໃຫ້ເຫັນເຖິງອຸປະສັກຕ່າງໆນາໆຕໍ່ຄວາມສະເໝີພາບບົດບາດຍິງ-ຊາຍ ໃນການປົກຄອງເຊັ່ນວ່າ ການບໍ່ເທົ່າທຽມກັນທາງເພດໃນບັນດາຕໍາແໜ່ງງານຂອງ

ພະນັກງານ. ບົດດັ່ງກ່າວນີ້ ຍັງຈະສະເໜີໃຫ້ເຫັນທິດທາງໃນຕໍ່ໜ້າ - ລວມທັງການສ້າງສິດທີ່ຕ່າງໆໃຫ້ກາຍເປັນໃຈກາງຂອງການປົກຄອງ ແລະ ການສ້າງຄວາມປ່ຽນແປງ ທາງດ້ານການເມືອງ. ກໍລະນີສຶກສາຈາກປະເທດ ຟີລິປີນ ແລະ ປະເທດ ອີຢີບ ສະແດງໃຫ້ເຫັນວ່າ ຄວາມພະຍາຍາມຂອງໜ່ວຍງານ ການປົກຄອງ ແລະ ອົງການຈັດຕັ້ງທາງສັງຄົມ ມີບົດບາດທີ່ສຳຄັນໃນການຮັບປະກັນວ່າ ກົດໝາຍວ່າດ້ວຍບົດ ບາດຍິງ-ຊາຍ ໄດ້ຮັບການລິເລີ່ມ ແລະ ຖືກຈັດຕັ້ງປະຕິບັດຂຶ້ນ.

## ບົດບາດຍິງ-ຊາຍ ແລະ ການປົກຄອງ: ພາບລວມ

**ອາລິຊອນ ໂບູດີ ບູີຊ**

"ຂ້າພະເຈົ້າ ແມ່ນຜູ້ໜຶ່ງທີ່ໄດ້ຮັບການເລືອກຕັ້ງ. ກ່ອນໜ້ານີ້ ຂ້າພະເຈົ້າ ບໍ່ເຄີຍໄດ້ຮັບອະນຸຍາດໃຫ້ອອກໄປຂ້າງນອກ, ບໍ່ເຄີຍໄດ້ເວົ້າ. ຂ້າ ພະເຈົ້າ ໄດ້ຮຽນເວົ້າ ແລະ ຮຽນນຳໃຊ້ໄມໂຄຣໂຟນ. ດຽວນີ້ ໄມໂຄຣໂຟນໄດ້ມາຢູ່ໃນກຳມືຂອງຂ້າພະເຈົ້າ, ແລະ ມັນຈະຢູ່ກັບຂ້າພະເຈົ້າໄປຕະຫລອດຊີວິດ - ບໍ່ ມີໃຜ ຈະເອົາມັນໄປຈາກຂ້າພະເຈົ້າໄດ້."

(ມູຣາວາຣານິດຊາ, ອິນເດຍ, ອ້າງອີງຈາກ ມຸກໂບແພດບີໄອ 2004: 37)

### ເປັນຫຍັງຈຶ່ງເລັ່ງໃສ່ ບົດບາດຍິງຊາຍ ແລະ ການປົກຄອງ?

ແມ່ຍິງແມ່ນບໍ່ມີສ່ວນຮ່ວມໃນການຕັດສິນບັນຫາ ຕັ້ງແຕ່ຂັ້ນຄອບຄົວຈົນກ້າວໄປເຖິງຂັ້ນສູງສຸດຂອງລັດຖະບານ. ການມີສ່ວນຮ່ວມຂອງແມ່ຍິງໃນລະບົບການປົກຄອງແມ່ນເປັນສິ່ງ ທີ່ມີຄວາມໝາຍສຳຄັນທີ່ສຸດ - ການຮັບຮູ້ສິດຂອງເຂົາເຈົ້າໃນການປາກເວົ້າ ແລະ ການຖືກຮັບຟັງ. ຍິ່ງໄປກ່ວານັ້ນ, ມັນແມ່ນເຄື່ອງມືໃນການປ່ຽນແປງທາງສັງຄົມ. ບັນດາສະຖາບັນການປົກຄອງໄດ້ມີຄວາມຮັບຮູ້ກ່ຽວກັບບົດບາດແມ່ຍິງ ແລະ ຜູ້ຊາຍໃນສັງຄົມ, ຕະຫລອດຈົນຮອດການເຂົ້າເຖິງສິດທິໂອກາດ ແລະ ແຫລ່ງຊັບພະຍາກອນຕ່າງໆ. ການໃຫ້ແມ່ຍິງມີສ່ວນຮ່ວມໃນການກຳນົດນະໂຍບາຍ ແລະ ຂະບວນການດັ່ງກ່າວ ແລະ ເພື່ອຍົກສູງເຂົາເຈົ້າຢູ່ໃນສະຖາບັນຕ່າງໆ, ມັນເປັນໄປໄດ້ທີ່ຈະສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ແຕກຕ່າງກັນ ຂອງເຂົາເຈົ້າ ແລະ ສະຖານະການຂອງແມ່ຍິງ ແລະ ຜູ້ຊາຍ, ແລະ ປະກອບສ່ວນເຂົ້າໃນການສ້າງຄວາມສະເໝີພາບບົດບາດຍິງຊາຍ.

**ການປົກຄອງແມ່ນຫຍັງ?**

ຄໍາວ່າ 'ການປົກຄອງ' ເປັນຄໍາທີ່ເຂົ້າໃຈໄດ້ຍາກສົມຄວນ ແລະ ທັງມີຫຼາຍຄໍານິຍາມ ຂຶ້ນກັບວ່າໃຜເປັນຜູ້ເວົ້າ ກ່ຽວກັບບັນຫາດັ່ງກ່າວ ແລະ ຄໍາສັບຢູ່ເນື້ອເລື່ອງດັ່ງກ່າວໄດ້ຖືກນໍາໃຊ້. ອະທິບາຍງ່າຍໆ, ການປົກຄອງແມ່ນ ກ່າວເຖິງການຕັດສິນບັນຫາໂດຍກຸ່ມບຸກຄົນທີ່ມີບົດບາດ (ຫຼື ຜູ້ມີສ່ວນຮ່ວມ), ລວມທັງຜູ້ທີ່ມີອໍານາດ ແລະ 'ປະຊາຊົນຄົນທໍາມະດາ'. ການຕັດສິນບັນຫາດັ່ງກ່າວແມ່ນມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ວິຖີການດໍາລົງຊີວິດ ຂອງ ແມ່ຍິງ ແລະ ຜູ້ຊາຍ, ຕໍ່ກັບລະບຽບການທີ່ເຂົາເຈົ້າຕ້ອງເຄົາລົບ ແລະ ຕໍ່ກັບໂຄງສ້າງທີ່ກໍານົດວ່າ ພວກ ເຂົາເຈົ້າຈະເຮັດວຽກ ແລະ ດໍາລົງຊີວິດຢູ່ໃສ ແລະ ຄືແນວໃດ. ການຕັດສິນບັນຫາດັ່ງກ່າວ ຍັງກໍານົດວ່າ ແຫລ່ງຊັບພະຍາກອນສ່ວນລວມໄດ້ຮັບການຈັດສັນແບ່ງປັນແບບໃດ, ແລະ ສິດຜົນປະໂຫຍດໃນການໄດ້ ຮັບການບໍລິການຂອງຂອງແມ່ຍິງ ແລະ ຜູ້ຊາຍ, ແລະ ການໄດ້ຮັບຄວາມສົນໃຈ.

ມັນອາດເປັນໄປໄດ້ທີ່ວ່າ ສະຖາບັນການປົກຄອງທໍາອິດທີ່ຈະຄິດແມ່ນລັດຖະບານ. ໃນທັງສອງ ພາກພື້ນຄື ທັງພາກເໜືອ ແລະ ພາກໃຕ້, ການຕັດສິນຂອງລັດຖະບານແມ່ນກໍ່ໃຫ້ເກີດ ແລະ ການດໍາລົງຄົງຕົວຂອງ ຄວາມບໍ່ສະເໝີພາບບົດບາດຍິງ-ຊາຍ ແຕ່ລັດຖະບານ ກໍ່ຍັງແມ່ນພາກສ່ວນທີ່ສໍາຄັນໃນການແກ້ ໄຂບັນຫາ ດັ່ງກ່າວ. ມັນບໍ່ພຽງແຕ່ແມ່ນລັດຖະບານແຫ່ງຊາດເທົ່ານັ້ນທີ່ຈະດໍາເນີນການຕັດສິນກ່ຽວກັບຊີວິດ ຂອງພວກ ເຮົາ; ສະຖາບັນການປົກຄອງຂອງສາກົນຕ່າງໆເຊັ່ນ: ສະຫະປະຊາຊາດ ແລະ ອົງການການຄ້າໂລກຕ່າງກໍ່ ເຮັດໜ້າທີ່ຕັດສິນບັນຫາກ່ຽວກັບໂລກຂອງພວກເຮົາເຊັ່ນກັນ ເຊິ່ງການຕັດສິນເຫຼົ່ານັ້ນແມ່ນມີອິດທິພົນຕໍ່ກັບ ການຕັດສິນຂອງລັດຖະບານສາກົນ.

ໃນທາງກົງກັນຂ້າມກັນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງແມ່ນມີບົດບາດເປັນກຸນແຈດອກສໍາຄັນ - ພັກດັນໃຫ້ລັດຖະບານດໍາເນີນງານເພື່ອແກ້ໄຂບັນຫາຄວາມບໍ່ສະເໝີພາບບົດບາດຍິງ-ຊາຍ ແລະ ຮັບຜິດ ຊອບຕໍ່ຄໍາໝັ້ນສັນຍາທີ່ໄດ້ເຮັດໄວ້. ເນື້ອໃນຂອງບົດສັງເຂບດັ່ງຕໍ່ໄປນີ້ສະແດງໃຫ້ເຫັນກ່ຽວກັບບັນຫານີ້ຢ່າງ ຈະແຈ້ງ. ໃນປະເທດເອຢິບ, ການຮ່ວມມືກັນຂອງອົງການຈັດຕັ້ງທາງສັງຄົມ ໂດຍມີສະພາແຫ່ງຊາດ ແມ່ຍິງ ເອຢິບເປັນຜູ້ໜູນຫລັງໄດ້ຊຸກຍູ້ໃຫ້ລັດຖະບານ ມີຄວາມຮັບຜິດຊອບຕໍ່ຂໍ້ຜູກມັດກ່ຽວກັບສິດທິຂອງແມ່ ຍິງ, ນໍາໃຊ້ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບແບບການຈໍາແນກຕໍ່ຕ້ານແມ່ຍິງ (CEDAW). ໃນປະ ເທດ ຟີລິປິນ, ລັດຖະບານທ້ອງຖິ່ນ ເຊິ່ງສະໜັບສະໜູນໂດຍບັນດາອົງການຈັດຕັ້ງທາງສັງຄົມ ແລະ ກຸ່ມ ແມ່ຍິງ ໄດ້ພັກດັນໃຫ້ມີການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍຄວາມຮຸນແຮງທາງເພດແຫ່ງຊາດ.




ແມ່ຍິງກັບການເປັນປະທານປະເທດ: Nomusa Dube, eThekwini ໂຄສົກຜູ້ທີ່ໜຶ່ງຂອງອົງການເຊື່ອມໂຍງບົດ ບາດ ຍິງ-ຊາຍ, ການເລືອກຕັ້ງ, ກອງປະຊຸມສື່ມວນຊົນ ໃນການຫາສຽງເລືອກຕັ້ງປະທານາທິບໍດີປະເທດ ອາຟຼິກາໃຕ້ປີ 2004.

(ໂດຍ Trevor Davies, SAMSO)

## ແມ່ນຫຍັງ ຄືເປົ້າໝາຍ ແລະ ຫລັກການຂອງການປົກຄອງ?

ມີຫຼາຍໜ່ວຍງານ ແລະ ອົງການຈັດຕັ້ງຕ່າງໆກໍ່ເຫັນວ່າ ການປົກຄອງທີ່ມີປະສິດທິຜົນແມ່ນເສັ້ນທາງ ກ້າວໄປ, ຕົວຢ່າງ: ການຫລຸດຜ່ອນຄວາມທຸກຍາກ, ຄວາມສະເໝີພາບ, ປະຊາທິປະໄຕ, ການສໍ້ລາດບັງຫລວງໃນສັງຄົມ. ຈຳນວນໜຶ່ງເຫັນວ່າການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຄວາມມີປະສິດທິພາບ ເປັນວິທີການທີ່ດີທີ່ສຸດເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ. ສຳລັບພວກອື່ນໆ, ການປົກຄອງຄວນຕ້ອງສົ່ງເສີມ ຄວາມຍຸຕິທຳໃນສັງຄົມ, ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ປະສິດທິພາບຫລາຍຂຶ້ນກໍ່ໃຫ້ເກີດສິດທິຂອງພົນລະເມືອງທຸກຄົນ.

ໃນທາງກົງກັນຂ້າມກັນ, ໃນການເຂົ້າເຖິງສິ່ງເຫລົ່ານີ້ຈະມີປະສິດທິຜົນໄດ້ແນວໃດ - ຫລື ດີກວ່ານັ້ນ - ການປົກຄອງແມ່ນບົນພື້ນຖານຄວາມຮັບຜິດຊອບ, ຄວາມໂປ່ງໃສ, ການມີສ່ວນຮ່ວມ ແລະ ສະຖາບັນການປົກຄອງທີ່ຕອບສະໜອງຕໍ່ພົນລະເມືອງຂອງເຂົາເຈົ້າ. ຫຼັກການດັ່ງກ່າວ - ຖ້າວ່າຈະໃຫ້ຄຳນິຍາມ, ນຳໃຊ້ ແລະ ວັດແທກດ້ວຍວິທີການທີ່ສະທ້ອນຄືນໃຫ້ເຫັນເຖິງບົດບາດຍິງຊາຍ - ສາມາດປັບປຸງການປະຕິບັດໜ້າທີ່ຂອງສະຖາບັນການປົກຄອງໃຫ້ດີຂຶ້ນ. ຕົວຢ່າງ: ຂະບວນການປົກຄອງແບບມີສ່ວນຮ່ວມຂອງແມ່ຍິງ ແລະ ຜູ້ຊາຍຢ່າງພ້ອມພຽງກັນແມ່ນເປັນໄປໄດ້ວ່າມັນຈະໄດ້ຮັບຜົນ ໃນແຜນງານຕ່າງໆທີ່ຕອບສະໜອງໄດ້ ຕາມຄວາມຮຽກຮ້ອງຕ້ອງການຂອງທັງເພດຍິງ ແລະ ຊາຍ, ເຮັດໃຫ້ມັນມີປະສິດທິຜົນຫຼາຍກ່ວາ. ເຊັ່ນດຽວກັນ ຖ້າກົນໄກຮັບຜິດຊອບສະເພາະ ມີໜ້າທີ່ເຮັດໃຫ້ລັດຖະບານຮັບຜິດຊອບຕໍ່ຄຳໝັ້ນສັນຍາຂອງຕົນຕໍ່ສົນທິສັນຍາ CEDAW ສາມາດເຮັດໃຫ້ແມ່ຍິງເຂົ້າເຖິງ ສິດທິຂອງເຂົາເຈົ້າ.

ວາລະສານ - 21 ມີນາ 2009

## ເປັນຫຍັງ ການປົກຄອງທີ່ມີຄວາມອ່ອນໄຫວຕໍ່ບົດ ບາດຍິງ-ຊາຍ ຈຶ່ງມີຄວາມສໍາຄັນ?

ໂດຍອີງໃສ່ຫຼັກການດັ່ງກ່າວທີ່ໄດ້ອະທິບາຍຂ້າງເທິງ ພວກເຮົາຕ້ອງມີການປົກຄອງທີ່ມີປະສິດທິຜົນໃນທຸກລະດັບ - ເລີ່ມແຕ່ລະດັບສາກົນຈົນເຖິງລະດັບທ້ອງຖິ່ນ, ແລະ ໃນພາກເໜືອ ແລະ ພາກໃຕ້. ການປົກຄອງຈະມີປະສິດທິຜົນໄດ້ຄືແນວໃດ ຖ້າວ່າມັນບໍ່ນໍາໄປສູ່ຄວາມສະເໝີພາບທີ່ມີຢູ່ໃນໂລກ , ບ່ອນທີ່ແມ່ຍິງມີທາງເລືອກ ແລະ ສິດທິຂອງເຂົາເຈົ້າປາກົດຜົນເປັນຈິງ. ການປົກຄອງຈະມີປະສິດທິຜົນໄດ້ຄືແນວໃດ ຖ້າບໍ່ພິຈາລະນາ ແລະ ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການທີ່ແຕກຕ່າງກັນ ແລະ ບູລິມະສິດຂອງແມ່ຍິງ ແລະ ຊາຍ ໃນການນໍາໃຊ້ງົບປະມານສ່ວນລວມ, ນະໂຍບາຍ, ກົດໝາຍ ແລະ ສົນທິສັນຍາ. ການປົກຄອງຈະມີປະສິດທິຜົນໄດ້ຄືແນວໃດ ຖ້າວ່າແມ່ຍິງບໍ່ສາມາດທີ່ຈະຊົມໃຊ້ສິດທິຂອງເຂົາເຈົ້າເຂົ້າໃນການຮ່ວມຕັດສິນບັນຫາທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ.

## ພວກເຮົາປະເຊີນກັບສິ່ງທ້າທາຍຫຍັງແດ່?
## ຄວາມລົ້ມເຫລວທີ່ຈະແກ້ໄຂບັນຫາຄວາມບໍ່ສະເໝີພາບບົດບາດຍິງ-ຊາຍ ທີ່ດໍາລົງຄົງຕົວຢູ່

ເຖິງແມ່ນວ່ານະໂຍບາຍ ແລະ ນິຕິກໍາຕ່າງໆ ຍັງບໍ່ສາມາດລຶບລ້າງຄວາມບໍ່ສະເໝີພາບບົດບາດຍິງ-ຊາຍ. ຕາມຄວາມເປັນຈິງກໍ່ຄືໃນບາງກໍລະນີ ນະໂຍບາຍ ແລະ ນິຕິກໍາດັ່ງກ່າວ ຍັງໄດ້ເຮັດໃຫ້ມີຄວາມບໍ່ສະເໝີພາບອີກຕື່ມ. ຕົວຢ່າງອັນໜຶ່ງ ແມ່ນນະໂຍບາຍການຄ້າເສລີເຊິ່ງນໍາໂດຍອົງການ ການຄ້າໂລກ, ທີ່ມີຜົນກະທົບຕໍ່ກັບແຮງງານເພດຍິງບໍ່ສາມາດຮຽກຮ້ອງສິດທິໃນການອອກແຮງງານ. ຕົວຢ່າງອື່ນໆອີກ ແມ່ນຄວາມລົ້ມເຫລວຢ່າງຕໍ່ເນື່ອງຂອງຫລາຍປະເທດ ເພື່ອຮັບຮູ້ການຂົ່ມຂືນກະທໍາສໍາເລົາຂອງຄູ່ສົມຫລົດເປັນອາຊະຍາກໍາໄດ້ - ເຊິ່ງກໍ່ໝາຍຄວາມວ່າ ຜູ້ກະທໍາຜິດດັ່ງກ່າວບໍ່ສາມາດຮຽກຮ້ອງໃຫ້ມາອະທິບາຍໄດ້. ໃນບາງຊຸມຊົນ ບາງຮີດຄອງປະເພນີ ໄດ້ກາຍເປັນສິ່ງສະກັດກັ້ນບໍ່ໃຫ້ແມ່ຍິງສາມາດສືບມູນມໍລະດົກທີ່ດິນໄດ້. ໃນຂະນະທີ່ໂຄງປະກອບຂອງສາກົນມີການທ້າທາຍການລ່ວງລະເມີດທາງເພດ - ຄືໃນຮູບແບບສົນທິສັນຍາ CEDAW ແລະ ສິດທິມະນຸດອື່ນໆ - ປະເທດທີ່ໄດ້ລົງນາມແລ້ວກໍ່ບໍ່ໄດ້ນໍາເອົາຄໍາໝັ້ນສັນຍາຂອງຕົນລົງໄປຈັດຕັ້ງປະຕິບັດຕົວຈິງ, ແລະ ປະເທດອື່ນໆ - ລວມທັງ ສະຫະລັດ ອາເມລິກາ - ຍັງມີຄວາມລົ້ມເຫລວທີ່ຈະໃຫ້ສັດຕະຍາບັນຕໍ່ສົນທິສັນຍາດັ່ງກ່າວ. ເປັນຫຍັງຫຼາຍສະຖາບັນການປົກຄອງບໍ່ຮັບຜິດຊອບຕໍ່ຄວາມບໍ່ສະເໝີພາບດັ່ງກ່າວ.

## ການຕັດສິນບັນຫາແມ່ນຖືກຄວບຄຸມໂດຍຜູ້ຊາຍ

ອຳນາດການຕັດສິນບັນຫາໃນສະຖາບັນການປົກຄອງຂອງແມ່ຍິງແມ່ນມີໜ້ອຍກວ່າຜູ້ຊາຍ. ໃນປີ 2008, ຈຳນວນແມ່ຍິງທົ່ວໂລກໃນລັດຖະສະພາໂດຍສະເລ່ຍມີແຕ່ 17,8 ສ່ວນຮ້ອຍ. ໃນການຕັດສິນບັນຫາສູງສຸດຂອງທະນະຄານກາງ ແຫ່ງສະຫະພາບເອີຣົບ ມີແມ່ຍິງໜ້ອຍກວ່າຜູ້ຊາຍ 5 ເທົ່າ. ລັດຖະບານລິເລີ່ມຂະບວນການປຶກສາຫາລືຂັ້ນທ້ອງຖິ່ນຍັງມີຄວາມລົ້ມເຫລວໃນການດຶງດູດເຮັດໃຫ້ແມ່ຍິງມີສ່ວນຮ່ວມພຽງພໍ. ແມ່ນແຕ່ຜູ້ຕັດສິນບັນຫາໃນບັນດາອົງການຈັດຕັ້ງທາງສັງຄົມຕ່າງໆກໍ່ຍັງແມ່ນຜູ້ຊາຍ. ບົນພື້ນຖານຄວາມບໍ່ສະເໝີພາບດັ່ງກ່າວຍັງມີແນວຄວາມຄິດທີ່ແປກໆເຊັ່ນວ່າ ຂົງເຂດວຽກງານຂອງຜູ້ຊາຍແມ່ນຢູ່ໃນຂົງເຂດລັດ ໃນຂະນະທີ່ແມ່ຍິງມີບົດບາດໃນການບໍລິຫານໃນຂອບເຂດສ່ວນຕົວຢູ່ຄົວເຮືອນ.

## ຂະບວນການປົກຄອງມັກຈະຈຳແນກບຸກຄົນທີ່ມີຄວາມຮັບຜິດຊອບອອກຢູ່ເລື້ອຍໆ ໂດຍສະເພາະແມ່ນແມ່ຍິງ

ໃນຕົວຈິງ, ການດຳເນີນວຽກງານຂອງສະຖາບັນການປົກຄອງຕ່າງໆແມ່ນບໍ່ຕາຍຕົວ ເຊິ່ງເປັນເລື່ອງຍາກສຳລັບແມ່ຍິງທີ່ຈະຮັກສາຄວາມສົມດຸນໃນການເຮັດວຽກຢູ່ໃນສະຖາບັນການປົກຄອງໂດຍທີ່ບໍ່ໄດ້ຮັບຄ່າຈ້າງ. ໃນທາງກົງກັນຂ້າມກັນ, ຂະບວນການມີສ່ວນຮ່ວມທີ່ໄດ້ເປີດໂອກາດປະຊາຊົນໄດ້ມີສ່ວນຮ່ວມການຕັດສິນບັນຫາ - ເຊັ່ນວ່າ ການມີສ່ວນຮ່ວມໃນວຽກງານການສ້າງງົບປະມານ - ສາມາດຍົກເວັ້ນແມ່ຍິງ ເຊັ່ນຕົວຢ່າງການບໍ່ສະໜອງໂຮງຮຽນລ້ຽງເດັກ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ.

## ແມ່ຍິງບໍ່ໄດ້ຮັບການປະຕິບັດຢ່າງສະເໝີພາບໃນສະຖາບັນການປົກຄອງ ແລະ ຂະບວນການປົກຄອງ

ເຖິງແມ່ນວ່າແມ່ຍິງຈະມີສ່ວນຮ່ວມ, ເຂົາເຈົ້າຈະຖືກໃຫ້ຮັບຜິດຊອບຢູ່ຂອບເຂດຂອງການຕັດສິນບັນຫາເລັກໆນ້ອຍໆ – ຖືກຈຳກັດໃນຂົງເຂດນະໂຍບາຍທີ່ຖືວ່າ 'ເບົາໆ' ເຊັ່ນ: ສາທາລະນະສຸກ ແລະ ການສຶກສາ – ໃນຄະນະທີ່ບັນຫາສຳຄັນໆແມ່ນຖືກຕັດສິນໂດຍຜູ້ຊາຍໃນຂອບເຂດທີ່ເອີ້ນກັນວ່າ 'ວົງໃນ'. ການຈຳແນກລັກສະນະດັ່ງກ່າວຍັງມີແຜ່ຫຼາຍໃນບັນດາອົງການຈັດຕັ້ງທາງສັງຄົມ ແລະ ຂະບວນການມີສ່ວນຮ່ວມໃນອຳນາດການປົກຄອງທ້ອງຖິ່ນ.

**ຈະເຮັດແນວໃດ ໃຫ້ການປົກຄອງມີປະສິດທິຜົນ ຖ້າຫາກວ່າ ມັນບໍ່ສາມາດນຳໄປສູ່ໂລກແຫ່ງຄວາມສະເໝີພາບ ເຊິ່ງວ່າແມ່ຍິງມີທາງເລືອກ ແລະ ສິດທິຂອງເຂົາເຈົ້າໃຫ້ປາກົດຜົນເປັນຈິງ?**

ວາລະສານ - 21 ມີນາ 2009

## ສິ່ງທີ່ມີຄວາມສຳຄັນຕໍ່ດ້ານບົດບາດຍິງ-ຊາຍ ໃນການປົກຄອງຄວນມີຄືແນວໃດ?

ການປົກຄອງທີ່ມີຄວາມອ່ອນໄຫວຮຽກຮ້ອງໃຫ້ມີຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການເຮັດໃຫ້ມີຄວາມເຂົ້າໃຈໃນສິດທິຂອງແມ່ຍິງແມ່ນເປັນເປົ້າໝາຍຫລັກ ແລະ ການປະຕິບັດຕົວຈິງຂອງການປົກຄອງ. ນະໂຍບາຍ ແລະ ນິຕິກຳຄວນຈະເວົ້າເຖິງຄວາມຕ້ອງການທີ່ແຕກຕ່າງກັນ, ຜົນປະໂຫຍດ, ບຸລິມະສິດ ແລະ ຄວາມຮັບຜິດຊອບຂອງແມ່ຍິງ ແລະ ຜູ້ຊາຍ, ຄືດັ່ງທີ່ໄດ້ລະບຸໄວ້ແລ້ວ ການສ້າງຄວາມເຂົ້າໃຈຢ່າງລະອຽດ, ຄວາມເຂົ້າໃຈບົດບາດຍິງ-ຊາຍຂອງຫລັກການພື້ນຖານກ່ຽວກັບປົກຄອງທີ່ມີປະສິດທິຜົນແມ່ນມີຄວາມສຳຄັນ ແຕ່ຫລັກການດັ່ງກ່າວຕ້ອງໄດ້ລວມຢູ່ໃນປະເພດຂອງວິທີການທີ່ເປັນຮູບປະທຳ ດັ່ງທີ່ຈະໄດ້ອະທິບາຍຂ້າງລຸ່ມນີ້.

## ຍົກສູງແມ່ຍິງໃຫ້ມີສ່ວນຮ່ວມໃນການປົກຄອງຫຼາຍຂຶ້ນກວ່າເກົ່າ

ການປົກຄອງແມ່ນມີຄວາມອ່ອນໄຫວຕໍ່ບົດບາດຍິງ-ຊາຍ ມັນຮຽກຮ້ອງໃຫ້ມີການເພີ່ມຈຳນວນແມ່ຍິງໃນລັດຖະສະພາ ແຕ່ມັນກໍ່ເປັນພຽງຈຸດເລີ້ມຕົ້ນເທົ່ານັ້ນ. ການປະຕິຮູບທາງເພດແມ່ນເລື່ອງລະອຽດອ່ອນໃນການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ - ໃນຮູບແບບຂອງລະບົບໂຄຕາການເລືອກຕັ້ງ ແລະ ການສ້າງຕັ້ງກະຊວງແມ່ຍິງ - ໄດ້ຊ່ວຍໃຫ້ເກີດຄວາມດຸ່ນດ່ຽງທາງເພດດີຂຶ້ນກວ່າເກົ່າ. ລະບົບໂຄຕາການເລືອກຕັ້ງຕ້ອງໄດ້ລະບຸມີອັດຕາສ່ວນຮ້ອຍຂອງສະມາຊິກທີ່ແນ່ນອນຂອງຈຳນວນແມ່ຍິງ ປະກອບເປັນສະມາຊິກໃນການປົກຄອງ. ຕົວຢ່າງ, ສາທາລະນະລັດ ຣູວັນດາ ເປັນປະເທດນຶ່ງໃນໂລກທີ່ມີຈຳນວນຂອງແມ່ຍິງຢູ່ໃນສະພາແຫ່ງຊາດສູງເຖິງ 56,3 ສ່ວນຮ້ອຍ - ສ່ວນໃຫຍ່ແມ່ນຍ້ອນລະບົບໂຄຕາຂອງລະບົບການເລືອກຕັ້ງ. ຖ້າວ່າການສ້າງໂອກາດໃຫ້ແມ່ຍິງມີຫຼາຍຂຶ້ນ ເຊິ່ງສະແດງອອກໃນການປະຕິຮູບການປົກຄອງ, ການລົງທຶນດ້ານເວລາ ແລະ ຊັບພະຍາກອນອື່ນໆ ເພື່ອເສີມສ້າງຄວາມສາມາດຂອງເຂົາເຈົ້າແມ່ນເປັນສິ່ງທີ່ສຳຄັນແລະຈຳເປັນທີ່ສຸດ.

## ປ່ຽນແປງສະຖາບັນການປົກຄອງເອງ

ການວິເຄາະຢ່າງລະອຽດຖີ່ຖ້ວນກ່ຽວກັບບົດບາດຍິງ-ຊາຍໃນການຈັດຕັ້ງປະຕິບັດຕົວຈິງປະຈຳວັນຂອງສະຖາບັນເຊິ່ງດຳເນີນການໂດຍຜ່ານການປະເມີນທັງພາຍໃນ ແລະ ພາຍນອກ, ແມ່ນເປັນວິທີທີ່ດີທີ່ຈະຄົ້ນພົບທັດສະນະຄະຕິ, ການປະພຶດ, ຄວາມນຶກຄິດ ແລະ ນະໂຍບາຍທີ່ເລືອກປະຕິບັດ ຫລື ປິດບັງຄວາມສະເໝີພາບບົດບາດຍິງ-ຊາຍ. ການປ່ຽນແປງທາງສະຖາບັນຄວນລວມມີ:

- ການສ້າງບັນດາສິດທິຕ່າງໆກາຍເປັນຈຸດສຸມຂອງສະຖາບັນການປົກຄອງ ແລະ ຂະບວນການປົກຄອງໂດຍມີລະບົບທີ່ເຂັ້ມແຂງຂອງການຮັບຜິດຊອບໃນການເຄົາລົບຄຳໝັ້ນສັນຍາສາກົນເຊັ່ນ ສົນທິສັນຍາ CEDAW.
- ການຮັບປະກັນວ່ານະໂຍບາຍຕ່າງໆແມ່ນຕອບສະໜອງໃຫ້ປະຊາຊົນທຸກໆຄົນ, ໄດ້ຮັບການແຈ້ງໃຫ້ຮູ້ໂດຍຂະບວນການມີສ່ວນຮ່ວມ ທີ່ກຳນົດຄວາມຮຽກຮ້ອງຕ້ອງການທີ່ແຕກຕ່າງກັນຂອງແມ່ຍິງ ແລະ ຜູ້ຊາຍ.
- ການຮັບປະກັນວ່າທຸກຂະບວນການປົກຄອງແມ່ນມີຄວາມໂປ່ງໃສ, ມີຄວາມຮັບຜິດຊອບ, ຖືກຕິລາຄາຢ່າງເປີດເຜີຍໂດຍສະຖາບັນການປົກຄອງຕ່າງໆ ກ່ຽວກັບຄວາມພະຍາຍາມຂອງເຂົາເຈົ້າ ໃນການແກ້ໄຂບັນຫາຄວາມບໍ່ສະເໝີພາບບົດບາດຍິງ-ຊາຍ ແລະ ທັງຮັບປະກັນການມີສ່ວນຮ່ວມທີ່ສະເໝີພາບຂອງແມ່ຍິງໃນການປົກຄອງ.
- ການສ້າງຄວາມອາດສາມາດໃຫ້ແມ່ຍິງ ແລະ ຜູ້ຊາຍ ໃນສະຖາບັນການປົກຄອງ ເພື່ອໃຫ້ເຂົາເຈົ້າເຂົ້າໃຈກ່ຽວກັບບົດບາດຍິງ-ຊາຍ - ໃນທາງກົງກັນຂ້າມ ການພັດທະນາທາງດ້ານການເມືອງແມ່ນເປັນສິ່ງຈຳເປັນເພື່ອນຳໄປສູ່ການປ່ຽນແປງ.
- ສົ່ງເສີມຄວາມສອດຄ່ອງຂອງໂມງການເຮັດວຽກ ແລະ ຮັບປະກັນໃຫ້ມີສະຖານທີ່ລ້ຽງເດັກແບບບໍ່ເສຍຄ່າ ຫລື ລາຄາບໍ່ແພງ ແລະ ສາມາດເຂົ້າເຖິງສະຖານທີ່ດັ່ງກ່າວ.

## ປ່ຽນແປງແນວຄວາມຄິດ-ການປົກຄອງແມ່ນໜ້າທີ່ຂອງໝົດທຸກຄົນ

ສຸດທ້າຍນີ້ ພວກເຮົາຈຳເປັນຕ້ອງລົບລ້າງແນວຄວາມຄິດທີ່ມີຢູ່ໃນປັດຈຸບັນທີ່ວ່າການປົກຄອງແມ່ນຂອບເຂດເອກະສິດຂອງຜູ້ຊາຍ - ຍົກຍ້າຍໃຫ້ອອກໄປຈາກປະຊາຊົນທົ່ວໄປ - ແລະ ສ້າງແຮງບັນດານໃຈໃຫ້ແມ່ຍິງ ແລະ ຜູ້ຊາຍ ເພື່ອກຳນົດພາລະບົດບາດຂອງຕົນເອງທັງນັ້ນກໍ່ເພື່ອນຳໄປສູ່ການປ່ຽນແປງໃນສັງຄົມ ທີ່ມີຄວາມສະເໝີພາບຫລາຍກ່ວາເກົ່າ. ຄືດັ່ງ ທ່ານ ມູຣາວານາຣີຣິດຊາ ໄດ້ກ່າວໄວ້ໃນເບື້ອງຕົ້ນວ່າ: “ດຽວນີ້ໄມໂຄຣໂຟນ ໄດ້ມາຢູ່ໃນມືຂອງຂ້າພະເຈົ້າແລ້ວ ແລະ ມັນຈະຢູ່ນຳຂ້າພະເຈົ້າຕະຫລອດຊີວິດ - ບໍ່ມີໃຜຈະເອົາມັນໄປຈາກຂ້າພະເຈົ້າໄດ້”.

----------------------------

ບົດຄວາມດັ່ງກ່າວ ສະຫລຸບການລາຍງານພາບລວມ ກ່ຽວ ກັບບົດບາດຍິງ-ຊາຍ ແລະ ການປົກຄອງ ໂດຍ ທ່ານ ນາງ ອາລີຊັນ ໂບຣດີ (ລາຍລະອຽດພົບໄດ້ທີ່ໜ້າປົກຂອງວາລະ ສານນີ້).

# 30 ປີຜ່ານມາ ແລະ ຕໍ່ໜ້າຂອງ CEDAW

"ພວກເຮົາໄດ້ເຫັນການປ່ຽນແປງຂອງແມ່ຍິງຢ່າງຊັດເຈນຜ່ານການນຳໃຊ້ສົນທິສັນຍາ CEDAW. ພວກເຮົາຮູ້ສຶກໄດ້ເຖິງການປ່ຽນແປງນັ້ນ. ພວກເຮົາໄດ້ປະສົບພົບພໍ້. ເພາະສະນັ້ນ, ພວກເຮົາ ຈຶ່ງແນະນຳມາຍັງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານທຸກໆແຫ່ງໃນທົ່ວໂລກຈົ່ງນຳໃຊ້ກົນໄກດັ່ງກ່າວ. ມັນມີຄວາມສຳຄັນທີ່ສຸດ ແລະ ມັນຈະສາມາດເຮັດໃຫ້ຊີວິດຂອງແມ່ຍິງມີຄວາມແຕກຕ່າງຫລາຍທີ່ສຸດ"

*ທ່ານດຣ. ອາຟັບ ມາເຣ, ຮອງປະທານ ສະມາຄົມການສ້າງຄວາມເຂັ້ມແຂງໃຫ້ແກ່ການມີສ່ວນຮ່ວມ ຂອງຊຸມຊົນໃນ ປະເທດອີຢິບ, ບົດຄວາມສ່ວນຕົວ,ພະຈິກ 2008)*

## ຄວາມອາດສາມາດຂອງສົນທິສັນຍາ CEDAW ເພື່ອບັນລຸຄວາມສະເໝີພາບບົດບາດຍິງ-ຊາຍ

30 ປີຜ່ານມານັບນັ້ງແຕ່ການເລີ່ມຕົ້ນຂອງສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW). ເລື່ອງລາວທີ່ເກີດຂຶ້ນໃນທົ່ວໂລກ ສະແດງໃຫ້ເຫັນວ່າສົນທິສັນ ຍາ CEDAW ໄດ້ເຮັດໃຫ້ມີຄວາມແຕກຕ່າງ ໂດຍສະເພາະແມ່ນຍ້ອນການເຮັດວຽກຂອງແມ່ຍິງ ແລະ ໂດຍການເນັ້ນໃສ່ຄວາມສະເໝີພາບບົດບາດຍິງ-ຊາຍຢູ່ໃນອົງການຈັດຕັ້ງທາງສັງຄົມ.

## ການລວບລວມພະລັງຂອງຊາວອີຢິບຕໍ່ສົນທິສັນຍາ CEDAW : ການປະກອບສ່ວນເຂົ້າໃນການປ່ຽນແປງຊີວິດຂອງແມ່ຍິງ

ສົນທິສັນຍາ CEDAW ໃນປະເທດອີຢິບ ໂດຍມີສະພາແມ່ຍິງແຫ່ງຊາດຂອງອີຢິບເປັນຜູ້ໜູນຫລັງ, ໄດ້ກາຍເປັນເຄື່ອງມືໃນການບັງຄັບປະຕິບັດສົນທິສັນຍາ CEDAW ທີ່ເປັນກົນໄກເພື່ອສ້າງຄວາມກ້າວໜ້າໃຫ້ແກ່ສິດຂອງແມ່ຍິງ ແລະ ຄວາມສະເໝີພາບບົດບາດຍິງ-ຊາຍໃນປະເທດອີຢິບ. ສະມາຊິກຂອງກຸ່ມດັ່ງກ່າວໄດ້ພະຍາຍາມໂນມນ້າວໃຫ້ລັດຖະບານ ກ່ຽວກັບບັນຫາທີ່ພົວພັນກັບສົນທິສັນຍາ CEDAW, ແລະ ສຳເລັດໃນການສ້າງບົດລາຍງານເບື້ອງຕົ້ນຂອງສົນທິສັນຍາ CEDAW ສະບັບທຳອິດໃນປີ 2001. ສິ່ງເລົ່ານີ້ໄດ້ຊຸກຍູ້ໃຫ້ລັດຖະບານປະເທດອີຢິບ ແກ້ໄຂບັນຫາຄວາມບໍ່ສະເໝີພາບບົດບາດຍິງ-ຊາຍໃນບັນດານິຕິກຳ ໂດຍຄຽງຄູ່ກັບການປະຕິບັດວຽກງານຂອງໜ່ວຍງານອື່ນໆກ່ຽວກັບບັນຫາຕ່າງໆ ເຊັ່ນວ່າ: ການຮຽກຮ້ອງຂອງແມ່ຍິງກ່ຽວກັບຄວາມສະເໝີພາບຂອງພົນລະເມືອງພາຍໃຕ້ລັດຖະທຳມະນູນ. ມັນໄດ້ມີການປ່ຽນແປງຫລາຍຢ່າງທີ່ເປັນຜົນສືບເນື່ອງມາຈາກຂະບວນການດັ່ງກ່າວໂດຍສະເພາະໃນກົດໝາຍວ່າດ້ວຍຄອບ ຄົວ. ແມ່ຍິງອີຢິບ

ທີ່ແຕ່ງດອງກັບຄົນຕ່າງປະເທດແມ່ນມີສິດໃນການເລືອກເອົາສັນຊາດໃຫ້ແກ່ລູກຂອງເຂົາເຈົ້າ. ຫຼາຍໆອຸປະສັກທາງດ້ານກົດໝາຍກ່ຽວກັບການຢ່າຮ້າງທີ່ແມ່ຍິງໄດ້ປະສົບພົບພໍ້ໃນເມື່ອກ່ອນ, ແມ່ນໄດ້ຖືກຍົກເລີກໄປ. ຕົວຢ່າງ ແມ່ຍິງ ສາມາດສະເໜີຂໍຢ່າຮ້າງໄດ້ໂດຍບໍ່ຕ້ອງມີຄຳເຫັນດີເຫັນພ້ອມຈາກຄູ່ສົມລົດ. ສັ່ງຫ້າມບໍ່ໃຫ້ແມ່ຍິງມີການເຄື່ອນໄຫວແມ່ນຖືກຍົກເລີກ – ແມ່ຍິງສາມາດຍື່ນຄຳຮ້ອງຂໍໜັງສືຜ່ານແດນໂດຍບໍ່ຕ້ອງຂໍຄວາມເຫັນດີຈາກສາມີຂອງເຂົາເຈົ້າ.

# ເລື່ອງລາວການປ່ຽນແປງຈາກອີຢິບ

## CEDAW ແມ່ນຫຍັງ?

ສົນທິສັນຍາຂອງ ສປຊ - ສົນທິສັນຍາ CEDAW - ຖືກຮັບຮອງເອົາໃນປີ 1979 ແລະ ມີຜົນບັງຄັບໃຊ້ໃນປີ 1981. ສົນທິສັນຍາ CEDAW ໄດ້ກຳນົດສິ່ງທີ່ຖືວ່າເລືອກປະຕິບັດຕໍ່ແມ່ຍິງ ແລະ ໄດ້ສ້າງວາລະສຳຫລັບການປະຕິບັດງານແຫ່ງຊາດເພື່ອຍຸດຕິການຈຳແນກດັ່ງກ່າວ. ລັດຖະບານທີ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາຜູກມັດກັບຕົວເອງໃນການວາງແຜນ ແລະ ດຳເນີນການຂອງຊຸດມາດຕະການເພື່ອຕໍ່ຕ້ານການຈຳແນກໃນທຸກລະດັບໃນສັງຄົມ ລວມທັງການຮັບປະກັນໂອກາດທີ່ເທົ່າທຽມກັນໃນຊີວິດການເມືອງ ແລະ ສະຖຽນລະພາບທາງສັງຄົມ, ແລະ ການເຂົ້າເຖິງຄວາມເທົ່າທຽມກັນໃນການເຮັດວຽກ, ການສຶກສາ ແລະ ສາທາລະນະສຸກ. ສົນທິສັນຍາເປັນເອກະລັກສະເພາະໃນການຮັບຮອງບັນດາສິດຕ່າງໆຂອງແມ່ຍິງ ນອກຈາກນີ້ຍັງຮຽກຮ້ອງໃຫ້ມີການປ່ຽນແປງພາກປະຕິບັດທາງດ້ານວັດທະນະທຳ ແລະ ສັງຄົມ ຂອງແມ່ຍິງ ແລະ ຜູ້ຊາຍສິ່ງເຫລົ່ານີ້ມີແນວໂນ້ມທີ່ຈະເປັນເຄື່ອງມືທຳລາຍຄວາມສະເໝີພາບບົດບາດຍິງ-ຊາຍ.

### ອະນຸສັນຍາເພີ່ມເຕີມສົນທິສົນຍາ CEDAW

ຮັບຮອງເອົາໃນປີ 1999, ອະນຸສັນຍາເພີ່ມເຕີມຄືການພັດທະນາ - ເປັນກົນໄກອັນໜຶ່ງເພື່ອເຮັດໃຫ້ລັດຖະບານມີຄວາມຮັບຜິດຊອບ. ດ້ວຍການໃຫ້ສິດແກ່ບຸກຄົນ ແລະ ກຸ່ມຄົນເພື່ອຮ້ອງຟ້ອງໄປຍັງຄະນະກຳມະການ **CEDAW** ກ່ຽວກັບການລະເມີດສິດທິຂອງແມ່ຍິງ, ອະນຸສັນຍາເພີ່ມເຕີມແມ່ນຊ່ວຍໃຫ້ຄະນະກຳມະການ ເພື່ອດຳເນີນການສອບຖາມຂໍ້ມູນໃນກໍລະນີເຫລົ່ານີ້ໃນປະເທດທີ່ໃຫ້ສັດຕະຍາບັນອະນຸສັນຍາເພີ່ມເຕີມດັ່ງກ່າວ. ພາຍໃຕ້ອະນຸສັນຍາເພີ່ມເຕີມດັ່ງກ່າວ ລັດຖະບານສາມາດຖືກຮ້ອງຂໍໃຫ້ອະທິບາຍ ແລະ ແກ້ໄຂການຮ້ອງທຸກກ່ຽວກັບການລະເມີດທີ່ຮ້າຍແຮງ ແລະ ການສືບສວນ-ສອບສວນສາມາດເປີດ

ເສີຍໄດ້. ເຖິງຢ່າງໃດກໍ່ຕາມອະນຸສັນຍາເພີ່ມເຕີມ ສາມາດນຳໃຊ້ໄດ້ກໍ່ຕໍ່ເມື່ອວ່າຂະບວນທັງໝົດແມ່ນໄດ້ຖືກຍອມຮັບໃນທຸກລະດັບ.

## ບົດລາຍງານເບື້ອງຕົ້ນຂອງສົນທິສັນຍາ CEDAW ແມ່ນຫຍັງ ແລະ ແມ່ນໃຜສາມາດເຮັດໄດ້?

ລັດຖະບານປະເທດໃດໜຶ່ງທີ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາ ຈະຕ້ອງມີພັນທະສົ່ງບົດລາຍງານຂອງຕົນໃຫ້ກັບຄະນະກຳມະການ **CEDAW** ກ່ຽວກັບສະຖານະພາບຂອງແມ່ຍິງພາຍໃນປີທີ່ໄດ້ໃຫ້ສັດຕະຍາບັນ ແລະ ລາຍງານທຸກໆ 4 ປີ ກ່ຽວກັບຄວາມຄືບໜ້າໃນການລຶບລ້າງອຸປະສັກຕ່າງໆທີ່ມີຕໍ່ຄວາມສະເໝີພາບບົດບາດຍິງ-ຊາຍ. ອົງການຈັດຕັ້ງທາງສັງຄົມແມ່ນມີພາລະບົດບາດສຳຄັນໃນການເຝົ້າຕິດຕາມຂະບວນການດັ່ງກ່າວໂດຍການສ້າງບົດລາຍງານເບື້ອງຕົ້ນ. ຕາມປົກກະຕິແລ້ວ ມັນແມ່ນການສັງລວມເອົາບັນດາຂໍ້ສະເໜີຈາກບັນດາອົງການຈັດຕັ້ງທາງສັງຄົມຈາກກໍລະນີສຶກສາພາຍໃນປະເທດ. ໃນຄະນະທີ່ ຂະນະກຳມະ ການ **CEDAW** ບໍ່ສາມາດທີ່ຈະບັງຄັບໃຫ້ລັດຖະບານປະຕິບັດຕາມຂໍ້ສະເໜີດັ່ງກ່າວ ບົດລາຍງານເບື້ອງຕົ້ນແມ່ນມີອິດທິພົນ ແລະ ແມ່ນມີລັກສະນະໂນ້ມນ້າວຈິດໃຈສູງ.

## ການສ້າງຄວາມສາມາດ ສຳລັບການສ້າງບົດລາຍງານເບື້ອງຕົ້ນພາຍໃຕ້ສົນທິສັນຍາ CEDAW

ຄືດັ່ງກໍລະນີຂອງລັດຖະບານປະເທດອີຢິບຕໍ່ສົນທິສັນຍາ CEDAW ໄດ້ສະແດງໃຫ້ເຫັນວ່າ: ອົງການຈັດຕັ້ງທາງສັງຄົມ ແມ່ນມີບົດບາດທີ່ສຳຄັນໃນການສ້າງຂໍ້ສະເໜີແນະຕ່າງໆ ມັນເປັນເລື່ອງຍາກສຳລັບລັດຖະບານທີ່ຈະເມີນເສີຍ, ນຳໄປສູ່ການປ່ຽນແປງຊີວິດຂອງແມ່ຍິງ. ຜົນສຳເລັດຂອງລັດຖະບານສ່ວນໃຫຍ່ແມ່ນຍ້ອນການສ້າງຄວາມອາດສາມາດໃຫ້ສະມາຊິກອົງການຈັດຕັ້ງສັງຄົມຈຳນວນ 40 ຄົນ - ດ້ວຍການສະໜອງການຝຶກອົບຮົມກ່ຽວກັບສົນທິສັນຍາ CEDAW - ແລະ ການສ້າງຄວາມສາມັກຄີລະຫວ່າງເຂົາເຈົ້າເອງ. ເຫດຜົນອື່ນໆ ແມ່ນການສະໜັບສະໜູນລັດຖະບານທີ່ໄດ້ຮັບຈາກສະພາແມ່ຍິງແຫ່ງຊາດ ເຊິ່ງແມ່ນອົງກອນໜຶ່ງທີ່ມີອຳນາດໂດຍໄດ້ຮັບການສ້າງຂຶ້ນໃນປີ 2000.

## ອຸປະສັກທີ່ຍັງຄ້າງຄາຢູ່ຕໍ່ສົນທິສັນຍາ CEDAW

ເຖິງວ່າຈະມີຜົນສຳເລັດດັ່ງກ່າວມາແລ້ວກໍ່ຕາມ ມັນຍັງມີຫຼາຍອຸປະສັກໃນການຈັດຕັ້ງປະຕິບັດທີ່ມີປະສິດທິຜົນຕໍ່ສົນທິສັນຍາ CEDAW. ມີບາງປະເທດ ລວມທັງ ສະຫະລັດອາເມລິກາຍັງບໍ່ໄດ້ໃຫ້ສັດຕະຍາບັນຕໍ່

ສົນທິສັນຍາ CEDAW ໃນຂະນະທີ່ປະເທດອື່ນໆກໍ່ຍັງບໍ່ຮັບຮອງເອົາອະນຸສັນຍາເພີ່ມເຕີມ. ເຖິງວ່າບາງປະເທດທີ່ໄດ້ລົງນາມແລ້ວໃນສົນທິສັນຍາ CEDAW ບາງຄັ້ງກໍ່ຍັງໄດ້ວາງຂໍ້ຍົກເວັ້ນຕໍ່ມາດຕາຕ່າງໆ. ໂດຍລວມແລ້ວແມ່ນເພື່ອລົບລ້າງວັດທະນະທຳທ້ອງຖິ່ນ ແລະ ຄວາມເຊື່ອຖືທາງສາສະໜາ. ຕົວຢ່າງ: ເຖິງແມ່ນວ່າຈະມີຄວາມກ້າວໜ້າໃນການຕອບໂຕ້ຕໍ່ກັບສົນທິສັນຍາ CEDAW ລັດຖະບານຂອງປະເທດອີຢິບ ຍັງໄດ້ເຮັດຂໍ້ຍົກເວັ້ນໃສ່ມາດຕາ 16 ກ່ຽວກັບຄວາມສະເໝີພາບທີ່ພົວພັນກັບແຕ່ງດອງ ໂດຍອ້າງອີງເຖິງເຫດຜົນທີ່ວ່າ ຄວາມເຊື່ອຖືສາສະໜາຢ່າງໜັກແໜ້ນທີ່ບັງຄັບໃຊ້ກັບການພົວພັນຂອງຄູ່ສົມລົດໃນປະເທດອີຢິບ ແລະ ອາດຈະບໍ່ສາມາດເອົາມາຕັ້ງເປັນຄຳຖາມໄດ້ (ອົງການສິດທິມະນຸດ, HRW 2004). ຍ້ອນວ່າກົດໝາຍຂອງຊີຣາ ກຳນົດໄວ້ວ່າ ຄວາມຮັບຜິດຊອບຂອງຜູ້ຊາຍຄົນໜຶ່ງແມ່ນການຮັບຜິດຊອບທາງດ້ານການເງິນພັນລະຍາ ແລະ ສານທີ່ພິຈາລະນາຄະດີການຢ່າຮ້າງແມ່ນກຳນົດວ່າ ເຮືອນຂອງຄູ່ສົມລົດແມ່ນຊັບສົມບັດຂາດຕົວຂອງຝ່າຍຊາຍ, ໂດຍບໍ່ສົນໃຈພິຈາລະນາສ່ວນປະກອບທາງດ້ານການເງິນ ຫຼື ຖານະການເງິນຂອງແມ່ຍິງໃນໄລຍະສົມລົດ.

ທັ້ງໆທີ່ມີອຸປະສັກຫລວງຫລາຍຄືແນວນີ້ ອົງການຈັດຕັ້ງທາງສັງຄົມມີບົດບາດໃນການຊຸກຍູ້ລັດຖະບານປະກາດໃຊ້ສົນທິສັນຍາ CEDAW ຢ່າງເຕັມສ່ວນ. ການເຮັດວຽກປັດຈຸບັນ ຂອງລັດຖະບານອີຢິບຕໍ່ສົນທິສັນຍາ CEDAW ເຊິ່ງມີສ່ວນຮ່ວມໃນການປຸກລະດົມເພື່ອສະໜັບສະໜູນການຍົກເລີກບັນດາຂໍ້ຍົກເວັ້ນ ແລະ ຮັບຮອງເອົາອະນຸສັນຍາເພີ່ມ ແມ່ນຕົວຢ່າງໜຶ່ງທີ່ດີ.

*ຂໍຂອບໃຈທ່ານ ອາຟັບ ມາເຣມ, ຣາເນຍ ໂຊຄາມີ, ມາວຄີ ອາລ ຊາມານີ ແລະ ຟາຕີມາ ຄາຟານີ ສຳລັບການປະກອບສ່ວນເຂົ້າໃນບົດຄວາມດັ່ງກ່າວ.*

*ອາລີຊັນ ໂບຣດີ ແມ່ນນັກຄົ້ນຄວ້າຂອງວາລະສານ ບຣິສ, ສະຖາບັນ ພັດທະນາການສຶກສາ*

## ການກະກຽມແບບບົດລາຍງານເບື້ອງຕົ້ນຂອງສົນທິສັນຍາ CEDAW – ບາງຄຳແນະນຳ

- ຂໍ້ມູນຂ່າວສານ ໃນບົດລາຍງານຕ້ອງມີການຈັດແຈງໃຫ້ສອດຄ່ອງກັບມາດຕາຕ່າງໆຂອງສົນທິສັນຍາ CEDAW ເຊິ່ງບໍ່ແມ່ນຈັດຕາມບັນຫາ.
- ບົດລາຍງານຈະຕ້ອງສົ່ງກ່ອນຢ່າງໜ້ອຍສອງອາທິດກ່ອນບົດລາຍງານທາງການ ແລະ ບົດລາຍງານເບື້ອງຕົ້ນຈະຖືກພິຈາລະນາໂດຍຄະນະກຳມະການ CEDAW.
- ບົດລາຍງານຕ້ອງຈະແຈ້ງ ສະເໜີຕາມຫລັກຖານ - ອົງການຈັດຕັ້ງທາງສັງຄົມສາມາດສັງລວມຂໍ້ມູນຂ່າວສານຈາກການສຶກສາໃນລະດັບທ້ອງຖິ່ນ ແລະ ສູນກາງ.

- ບົດລາຍງານເບື້ອງຕົ້ນທີ່ດີ ແມ່ນຕ້ອງກວມເອົາປະຫວັດຄວາມເປັນມາຂອງກໍລະນີທີ່ສະທ້ອນໃຫ້ເຫັນເຖິງວິທີການທີ່ແຕກຕ່າງກັນຂອງສິດທິແມ່ຍິງໄດ້ທີ່ຖືກລະເມີດ.
- ຂໍ້ມູນຂ່າວສານສໍາລັບກໍລະນີດັ່ງກ່າວສາມາດສັງລວມໄດ້ໂດຍຜ່ານການສໍາພາດ ແລະ ແບບສອບຖາມ.

*ຖ້າຕ້ອງການຂໍ້ມູນຂ່າວສານອື່ນໆ ວ່າຄວນຈະກະກຽມບົດລາຍງານເບື້ອງຕົ້ນຂອງສົນທິສັນຍາ CEDAW ຄືແນວໃດ ກະລຸນາເບິ່ງທີ່:*
www1.umn.edu/humanrts/iwraw/proceduralquide-08.html ຫຼື ຕິດຕໍ່ໄດ້ທີ່ ຫ້ອງການຄະນະກໍາມາທິການໃຫຍ່ວ່າດ້ວຍສິດທິມະນຸດ ໃນເມືອງເຈັນເນວາ

---

## ການນໍາເອົາກົດໝາຍວ່າດ້ວຍຄວາມຮຸນແຮງທາງເພດເຂົ້າໃນພາກປະຕິບັດຕົວຈິງໃນປະເທດຟີລິປິນ

ທ່ານ ມາລີໂຕນາ ວິກຕາ-ລາບາໂຈ, ຜູ້ອໍານວຍການໃຫຍ່, ດັດສະນີການພັດທະນາດ້ານສັງຄົມ

ເມື່ອລັດຖະບານໄດ້ອອກກົດໝາຍທີ່ດີແລ້ວ ພວກເຂົາຈະຮັບປະກັນໄດ້ຄືແນວໃດວ່າມັນຈະມີຜົນຕໍ່ຄວາມຕ້ອງການນັ້ນ? ປະສົບການຂອງປະເທດຟີລິປິນ - ກໍລະນີກົດໝາຍໃໝ່ວ່າດ້ວຍຄວາມຮຸນແຮງທາງເພດ ແລະ ການກະທໍາສໍາເລົາເດັກຖືກນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ ດ້ວຍການນໍາໃຊ້ລະບົບການປົກຄອງແບບກະຈາຍອໍານາດ-ສະໜອງໃຫ້ໄດ້ບາງຄໍາຕອບ.

### ບັນຫາມີຂະໜາດແນວໃດ?

ໃນປີ 2003 ໜ່ວຍງານ ຕໍາຫລວດແມ່ຍິງແຫ່ງຊາດຂອງຟີລິປິນ ສາມາດເກັບກໍາໄດ້ວ່າ ມີການລະເມີດຄວາມຮຸນແຮງທາງເພດຈໍານວນ 8,011 ກໍລະນີ ເຊິ່ງ 10 ສ່ວນຮ້ອຍຂອງຈໍານວນດັ່ງກ່າວ ແມ່ນກໍລະນີການຂົ່ມຂືນ. ໜຶ່ງສ່ວນສາມຂອງຜູ້ລອດຊີວິດຈາກການກະທໍາສໍາເລົາເດັກ ແມ່ນເດັກທີ່ມີອາຍຸຕໍ່າກ່ວາ 18 ປີ. ການລະເມີດສ່ວນຫຼາຍແມ່ນເກີດຂຶ້ນຢູ່ພາຍໃນເຮືອນ ເຊິ່ງແມ່ນຍາດຕິພີ່ນ້ອງທີ່ເປັນເພດຊາຍ ຫຼື ພໍ່ລ້ຽງ. ຕົວເລກດັ່ງກ່າວແມ່ນສູງໜ້າເປັນຫ່ວງ ແຕ່ເຫດການຕົວຈິງຂອງການລະເມີດແມ່ນມີແນວໂນ້ມສູງຂຶ້ນເລື້ອຍໆ - ເນື່ອງຈາກຂໍ້ຫ້າມທາງສັງຄົມນັບແຕ່ນັ້ນມາໄດ້ມີຫຼາຍໆກໍລະນີໄດ້ໄປແຈ້ງຄວາມ ແລະ ໃຫ້ມັນເໜາະສົມ ມາເຖິງປັດຈຸບັນກົດໝາຍທີ່ມີປະສິດຜົນຍັງຂາດນິຕິກໍາທີ່ຈໍາເປັນ.

## ມາດຕະການທາງກົດໝາຍ - ການຕອບຮັບຂອງລັດຖະບານ

ໃນປີ 2004 ກົດໝາຍວ່າດ້ວຍການຕ້ານຄວາມຮຸນແຮງທາງເພດຕໍ່ແມ່ຍິງ ແລະ ເດັກນ້ອຍ ຖືກຮັບຮອງເອົາໃນປະເທດຟີລິປິນ. ສິ່ງເຫລົ່ານີ້ໄດ້ໃຫ້ອຳນາດແກ່ລັດຖະບານເພື່ອເຂົ້າແຊກແຊງໃນກໍລະນີຂອງຄວາມຮຸນແຮງທີ່ເກີດຂຶ້ນໃນຄອບຄົວ, ຫລື ການເຮັດຜິດຕໍ່ແມ່ຍິງ ແລະ ເດັກນ້ອຍ - ກໍລະນີທີ່ພິຈາລະນາກ່ອນໜ້ານີ້ບໍ່ວ່າຈະແມ່ນບັນຫານອກຈາກອຳນາດສານຂອງລັດຖະບານ. ໃນປະເທດຟີລິປິນໄດ້ມີການຮັບຮູ້ວ່າ ການຮັບຮອງເອົາກົດໝາຍແມ່ນຍັງບໍ່ທັນພຽງພໍ. ຄວາມພະຍາຍາມຈຳເປັນຕ້ອງມີເພື່ອໃຫ້ຮັບປະກັນວ່າ ສັງຄົມຕ້ອງຮູ້ກ່ຽວກັບກົດໝາຍດັ່ງກ່າວ ແລະ ຮູ້ວ່າຈະນຳໃຊ້ມັນຄືແນວໃດ ແລະ ຮູ້ສຶກສະບາຍໃຈໃນການປະຕິບັດ. ມັນຈະຕ້ອງມີຂະບວນການສະໜັບສະໜູນທີ່ຈະແຈ້ງກ່ຽວກັບການລາຍງານການລະເມີດດັ່ງກ່າວ.

## ບົດບາດການກະຈາຍອຳນາດຂອງລັດ

ສິ່ງທີ່ເຮັດໃຫ້ການນຳໃຊ້ກົດໝາຍດັ່ງກ່າວນຳໄປສູ່ການປ່ຽນແປງທີ່ແທ້ຈິງ ແມ່ນຄຸນລັກສະນະການກະຈາຍອຳນາດຂອງລັດຖະບານຟີລິປິນ. ທີ່ແຕກຕ່າງຈາກໜ່ວຍງານຂອງລັດຖະບານໃນທ້ອງຖິ່ນ ຈົນໄປຮອດຂັ້ນບ້ານ ໄດ້ຊ່ວຍໃນການສ້າງຂະບວນການທີ່ມີສ່ວນຮ່ວມເພື່ອຍົກລະດັບຄວາມຮັບຮູ້ບັນຫາຂອງລັດຖະບານກ່ຽວກັບຄວາມຮຸນແຮງທາງເພດ ແລະ ເພື່ອຮັບມືກັບກົດໝາຍທີ່ມີຢູ່ ຕົວຢ່າງ: ແມ່ນເຂດເທດສະບານ ບີນັງໂກນັນ ຢູ່ເຂດດອນລູເຊິນ ທີ່ຖືກຄັດເລືອກໃຫ້ດຳເນີນໂຄງການຊຸມຊົນຕົວຢ່າງ ຍ້ອນວ່າການລ່ວງລະເມີດທາງເພດຂອງແມ່ຍິງແມ່ນມີຈຳນວນຫລວງຫລາຍ. ຈຸດປະສົງຂອງໂຄງການນີ້ແມ່ນເພື່ອແກ້ໄຂຄວາມຮຽກຮ້ອງຕ້ອງການຂອງຜູ້ທີ່ຖືກເຄາະຮ້າຍຈາກການກະທຳສຳເລົາເດັກ ໂດຍສະເພາະແມ່ນແມ່ຍິງທີ່ມີອາຍຸ 7-18 ປີ ເພື່ອປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງຕໍ່ໄປອີກ ແລະ ຊຸກຍູ້ໃຫ້ເຂົາເຈົ້າມີການລາຍງານການລະເມີດດັ່ງກ່າວ. ຄະນະກຳມະການຊີ້ນຳຂອງເຈົ້າໜ້າທີ່ໃນເທດສະບານໄດ້ມອບໝາຍໃຫ້ໜ່ວຍງານກ່ຽວກັບຄວາມສະເໝີພາບບົດບາດຍິງຊາຍ ແລະ ສະໜັບສະໜູນສິດທິເດັກລະດັບທ້ອງຖິ່ນກ່ຽວກັບການປູກຈິດສຳນຶກບັນຫາເຫລົ່ານີ້ຢູ່ໃນຊຸມຊົນ ແລະ ຂັ້ນຄອບຄົວ. ໃນການສຳມະນາໜຶ່ງໄດ້ຈັດຢູ່ໃນເທດສະບານໃນການປຶກສາຫາລືກົດໝາຍໃໝ່ ແລະ ການສົນທະນາສິດທິຂອງແມ່ຍິງ ແລະ ເດັກນ້ອຍໃນວົງກວ້າງ ພາກສ່ວນທີ່ສຳຄັນໃນເຂດເທດສະບານເມືອງ ລວມທັງການເລືອກຕັ້ງໃນຂັ້ນບ້ານ ການເບິ່ງແຍງ ແລະ ພະນັກງານສາທາລະນະສຸກ ພະນັກງານຕຳຫລວດ ຄູອາຈານ ແລະ ສະມາຊິກຂອງອົງການຈັດຕັ້ງທາງສັງຄົມ - ເຂົ້າຮ່ວມການສຳມະນາ. ຜູ້ເຂົ້າຮ່ວມໄດ້ຮຽນຮູ້ວິທີທີ່ຈະໄຈ້ແຍກ ແລະ ລາຍງານຕາມການກະທຳສຳເລົາ. ເຂົາເຈົ້າຄິດວ່າຈະຜ່ານສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ໂດຍການໂອ້ລົມກັບແມ່ຍິງ ແລະ ຜູ້ຊາຍທີ່ຢູ່ໃນຊຸມຊົນ ແລະ ພັດທະນາອຸປະກອນການສຶກເພື່ອການປ້ອງກັນ, ການລາຍງານ ແລະ ພຶດຕິກຳຕໍ່ກັບຄວາມຮຸນແຮງທາງເພດ. ຄຽງຄູ່ກັບກິດຈະກຳດັ່ງກ່າວນີ້ ລັດຖະບານແຫ່ງຊາດໄດ້ສ້າງຕັ້ງລະບົບທີ່ເປັນບ່ອນອີງຢ່າງ

ຈະແຈ້ງ ແລະ ກົນໄກການຕອບໂຕ້ລະຫວ່າງໜ່ວຍງານສໍາຫລັບການລາຍງານກໍລະນີການກະທໍາສໍາເລົາແມ່ຍິງ ແລະ ເດັກນ້ອຍ.




ຄວາມຮຸນແຮງໃນຄອບຄົວ: ປ້າຍໂຄສະນາໃນເມືອງ ນາມີເບ່ຍ ເຕືອນໃຫ້ຜູ້ຄົນໃຫ້ຮູ້ວ່າ ການໃຊ້ຄວາມຮຸນແຮງທາງເພດ ແມ່ນຜິດກົດໝາຍ. (ໂດຍ ທ່ານ ໂຄເລັນ ໂລ ມໍນາ)

---

**ໃນປະເທດຟີລິປິນ ມັນໄດ້ເປັນທີ່ຮູ້ຈັກກັນດີແລ້ວວ່າ ການຮັບຮອງເອົາບັນດາກົດໝາຍຕ່າງໆນັ້ນ ແມ່ນຍັງບໍ່ທັນພຽງພໍ. ມັນຍັງຕ້ອງມີຄວາມພະຍາຍາມຕື່ມອີກເພື່ອຮັບປະກັນວ່າສັງຄົມໄດ້ຮັບຮູ້ກົດໝາຍເຫຼົ່ານີ້ ຮູ້ວ່າຈະນໍາໃຊ້ມັນຄືແນວໃດ ແລະ ຮູ້ສຶກສະບາຍໃຈໃນການຈັດຕັ້ງປະຕິບັດ. ພ້ອມດຽວກັນນີ້ ມັນກໍ່ຈະຕ້ອງມີ ຂະບວນການສະໜັບສະໜູນທີ່ຈະແຈ້ງສໍາຫຼັບການລາຍງານການກະທໍາສໍາເລົາຢູ່ໃນສະຖານທີ່ຕ່າງໆ.**

---

## ຜົນໄດ້ຮັບ

ໃນສາມປີ ນັບແຕ່ການເປີດຕົວຂອງໂຄງການດັ່ງກ່າວ ກໍລະນີທີ່ໄດ້ຮັບການລາຍງານການເພີ່ມຂຶ້ນກ່ຽວກັບການກະທໍາສໍາເລົາເດັກແມ່ນເພີ່ມຂຶ້ນຫລາຍ. ບ້ານ, ອໍານາດການປົກຄອງທ້ອງຖິ່ນ ແລະ ລັດຖະບານໄດ້ອອກຄໍາສັ່ງປ້ອງກັນການເຮັດຜິດ ແລະ ຫລາຍກໍລະນີທີ່ຜິດກົດໝາຍທີ່ໄດ້ຍື່ນສໍານວນ. ນອກຈາກນີ້, ຮູບແບບຕ່າງໆຂອງການໃຫ້ຄວາມຊ່ວຍເຫລືອຕໍ່ຜູ້ລອດຊີວິດຈາກການກະທໍາສໍາເລົາ ແລະ ຄອບຄົວຂອງເຂົາເຈົ້າໄດ້ຮັບການຂະຫຍາຍເວລາຈາກລັດຖະບານ. ນີ້ແມ່ນລວມທັງການຊ່ວຍເຫລືອທາງດ້ານການສຶກສາສໍາລັບເດັກນ້ອຍຜູ້ຖືກເຄາະຮ້າຍ ການຊ່ວຍເຫລືອໃນເວລາສານພິຈາລະນາຄະດີ ຮ່ວມມືກັບຫ້ອງການໄອ

ຍະການເພື່ອການຊ່ວຍເຫຼືອທາງກົດໝາຍໃນການເລັ່ງການດຳເນີນຄະດີ ແລະ ບາງກໍລະນີ ແມ່ນໄດ້ຊອກຫາສູນພັກເຊົາສຳລັບຄອບຄົວຜູ້ລອດຊີວິດ.

## ແມ່ນຫຍັງເປັນສິ່ງທີ່ປະກອບສ່ວນເຂົ້າໃນການປ່ຽນແປງເຫຼົ່ານີ້?

ກຸນແຈດອກສຳຄັນທີ່ນຳໄປສູ່ຜົນສຳເລັດຂອງລິເລີ່ມໂຄງການນີ້ ແມ່ນການຮັບຮູ້ຕໍ່ຄວາມຫຍຸ້ງຍາກໃນການແປກົດໝາຍແຫ່ງຊາດນຳໃຊ້ເຂົ້າໃນພາກປະຕິບັດຕົວຈິງ, ແລະ ການປົກຄອງແບບກະຈາຍອຳນາດໃນບານທີ່ເປັນໜ່ວຍງານໜຶ່ງຂອງການປ່ຽນແປງ. ບໍ່ພຽງແຕ່ແມ່ນລັດຖະບານຂັ້ນທ້ອງຖິ່ນທີ່ເຫັນປະໂຫຍດຂອງການຮັບຜິດຊອບຕໍ່ບົດບາດຂອງເຂົາເຈົ້າໃນການປ້ອງກັນ ແລະ ຮັບຜິດຊອບກໍລະນີຕໍ່ກັບຄວາມຮຸນແຮງທາງເພດແຕ່ຍັງຄວາມຮັບຮູ້ຂອງຄວາມຮັບຜິດຊອບຮ່ວມກັນ ສຳຫລັບການສ້າງກົດໝາຍວ່າດ້ວຍຄວາມຮຸນແຮງທາງເພດໄດ້ຮັບການສົ່ງເສີມຢູ່ລະດັບຊຸມຊົນ ແລະ ຄອບຄົວ.

---

ກວດແກ້ໂດຍ ທ່ານ ອາລີຊັນ ໂບຣດີ, ບີຣດຊ, ສະຖາບັນການສຶກສາການພັດທະນາ

### ເອກະສານອ້າງອີງ ແລະເອກະສານແນະນຳ


ວາລະສານ BRIDGE (2009) ***'ບົດບາດຍິງ-ຊາຍ ແລະ ການປົກຄອງ'***, Cutting Edge Pack, Brighton: BRIDGE/IDS
http://www.bridge.ids.ac.uk/re[ports_gend_CEP.html#Governance

Basu, A. (2000) ***'ບົດບາດຍິງ-ຊາຍ ແລະ ການປົກຄອງ: ບັນດາແນວຄວາມຄິດ ແລະ ເນື້ອໃນຈິດໃຈຕ່າງໆ'***, ໃນ M. Nussbaum, A. Basu, Y. Tambiah and N. G. Jayal, ***ບົດຄວາມກ່ຽວກັບບົດບາດຍິງ-ຊາຍ ແລະ ການປົກຄອງ,*** ເມືອງ New York: ສະຫະປະສາຊາດເພື່ອການພັດທະນາ (UNDP)
http://tinyurl.com/dczgkr

ທ່ານ Felix, M. (2006) ***'ຄວາມຮຸນແຮງທາງເພດ ໃນປະເທດຟີລິບປິນ: ການຕີລາຄາຜົນໄດ້ຮັບຂອງນະໂຍບາຍ',*** ບົດສະເໜີໃນກອງປະຊຸມຄັ້ງທີ 10, ກອງປະຊຸມປະຈຳປີກ່ຽວກັບສາຫາລະນະສຸກ, ປະເທດອີຢີບ, 29 ຕຸລາ - 2 ພະຈິກ
http://tinyurl.com/d6gjd7

***Human Rights Watch*** (2004) ***ການຕັດຂາດຈາກຄວາມຍຸຕິທຳ: ພັນທະຂອງປະເທດອີຢີບ ພາຍໃຕ້ກົດໝາຍສາກົນ,***
http://www.hrw.org/en/node/11887/section/9


ວາລະສານ - 21 ມີນາ 2009

IKNOWpolitics Website: http://www.iknowpolitics.org/en

ອົງການສິດທິແມ່ຍິງສາກົນເຂດພາກພື້ນອາຊີປາຊີຟິກ (IWRAW) (2009) ***ການເຮັດບົດລາຍງານເບື້ອງຕົ້ນສະເໜີຄະນະກຳມະການສົນທິສັນຍາ CEDAW: ການແນະນຳບັນດາຂັ້ນຕອນ***, ມັງກອນ 2009, ມາເລເຊຍ: IWRAW

http://www1.umn.edu/humanrts/iwraw/proceduralguide-08.html

ທ່ານ Mukhopaddhyay, M. ແລະ ທ່ານ Meer, S. (2004) ***ການທາສຽງ ແລະ ການແບ່ງພື້ນທີ່ທາສຽງ: ການກຳນົດຄືນກ່ຽວກັບການປົກຄອງຈາກບົດບາດຍິງ-ຊາຍ***, ເມືອງ Amsterdam: ສະຖາບັນລອຍຍ່ານໂທຼປິກກອນ

http://www.kit.nl/net/KIT_Publicaties_output/ShowFile2.aspx?e=646

ທ່ານ Rai, S. ແລະ ທ່ານ Waylen, G. (2008***) 'ການນຳສະເໜີ: ມູມມອງຂອງແມ່ຍິງໃນການວິເຄາະ ແລະ ການຟື້ນຟູຂອງການປົກຄອງໃນເວທີສາກົນ'***, ໃນ ທ່ານ S. Rai ແລະ ທ່ານ G. Waylen (ສະບັບປັບປຸງ), ການປົກຄອງໃນເວທີສາກົນ: ມຸມມອງຂອງແມ່ຍິງ, Basingstoke: Palgrave macmillan.

ທ່ານ Shin, H (2004), CEDAW ແລະ ສິດທິມະນຸດຂອງແມ່ຍິງ: ຜົນສຳເລັດ ແລະ ອຸປະສັກ, ບົດຄວາມສະເໜີກ່ຽວກັບສິດທິມະນຸດ 2004: ໃນປີທີ່ມີການທົບທວນຄືນ, ກອງປະຊຸມປະຈຳປີວ່າດ້ວຍກົດໝາຍສິດທິມະນຸດຢູ່ສູນຄັດເຕີນ, ມະຫາວິທະຍາໄລໂມນາດສ

http://www.law.monash.edu.au/castancentre/events/2004/hesoo-shin-paper.pdf

ກອງທຶນສະຫະປະຊາຊາດເພື່ອການພັດທະນາແມ່ຍິງ (UNIFEM) (2008) ***'ແມ່ນໃຜ ມີຄຳຕອບໃຫ້ກັບແມ່ຍິງ? ບົດບາດຍິງ-ຊາຍ ແລະ ຄວາມເຊື່ອໝັ້ນ'***, *ຄວາມກ້າວໜ້າຂອງແມ່ຍິງໃນທົ່ວໂລກ 2008/2009*, ເມືອງ New York: ສາມາດໂລດໄດ້ເປັນພາສາ ອັງກິດ ຝຣັ່ງ ແລະ ແອດສປາຍທີ່

http://unifem.org/progress/2008/index.html

ມະຫາວິທະຍາໄລ ສະຖາບັນພົນລະເມືອງຟີລິບປິນ (2004) ***ໄວຈະເລີນພັນ ແລະ ການສຶກສາເພດສຳພັນ 3***, ເມືອງ ຄີຊອນ: ມະຫາວິທະຍາໄລຟີລິບປິນ

---

## ວາລະສານ IN BRIEF

ສົ່ງຂ່າວເຖິງພວກເຮົາໃນສິ່ງທີ່ທ່ານຄິດກ່ຽວກັບວາລະສານສະບັບນີ້

Email: bridge@ids.ac.uk ຫຼື ຂຽນເຖິງພວກເຮົາ:

BRIDGE, IDS, University of Sussex,

Brighton, BN1 9RE, UK

ແຟກ: +44 (0)1273 621202

**ຫາກຕ້ອງການເບິ່ງຕົ້ນສະບັບພາສາອັງກິດ, ກະລຸນາເຂົ້າຢ້ຽມຢາມເວບໄຊ:**

http://www.bridge.ids.ac.uk/re[ports_gend_CEP.html#Governance

ຂໍ້ມູນທີ່ໄດ້ພົບ ,ການຕີຄວາມໝາຍ ,ຄວາມຄິດເຫັນ ແລະ ສິ່ງທັງໝົດທີ່ໄດ້ຂຽນລົງໃນແຕ່ລະບົດນັ້ນແມ່ນຜົນງານຂອງຜູ້ຂຽນພຽງຄົນດຽວ, ເຊິ່ງທັງໝົດນີ້ຈະບໍ່ມີຜົນສະທ້ອນຕໍ່ມູນນິທິເອເຊຍ ເຊັ່ນດຽວກັນ ມູນນິທິບໍ່ຮັບຜິດຊອບ ,ຄໍ້າປະກັນໃນການແປເອກະສານນີ້.

ວາລະສານ - 21 ມີນາ 2009